# ຄໍານິຍາມ Gender Equality

1. **GE = ສິດສະເໝີພາບ ລະຫວ່າງ ຍິງຊາຍ ສະແດງອອກແນວໃດ ?**
   **(Gender Equality)**

ຍິງ ແລະ ຊາຍ ຖືກຮັບຮູ້ວ່າມີຖານະພາບ ເຊັ່ນດຽວກັນ ແລະ ໄດ້ຮັບເງື່ອນໄຂເຊັ່ນດຽວກັນ ເພື່ອຊົມໃຊ້ ສິດ ທິມະນຸດຂອງເຂົາເຈົ້າ, ເພື່ອສະແດງສັກກາຍະພາບຂອງເຂົາເຈົ້າ ເຊັ່ນດຽວກັນ ໃນທຸກຂົງເຂດການພັດທະນາ.

ຍິງ ແລະ ຊາຍ ໄດ້ຮັບ ຜົນປະໂຫຍດ ເຊັ່ນດຽວກັນ ຈາກ ການພັດທະນາ.

**GE = ຄວາມທ່ຽງທໍາ ລະຫວ່າງ ຍິງຊາຍ (Gender Equity) ແມ່ນຫຍັງ?**

ແມ່ນ ຂັ້ນຕອນ ແລະ ໝາກຜົນການປະຕິບັດຢ່າງເປັນທໍາ ຕໍ່ຍິງ ຕໍ່ຊາຍ, ເຊິ່ງລວມມີການປະຕິບັດຍຸດທະສາດ ແລະ ມາດຕະການຕ່າງໆ (ລວມທັງມາດຕະການສະເພາະຊົ່ວຄາວ) ທີ່ລົບລ້າງການເອົາປຽບທາງສັງຄົມຕໍ່ແມ່ຍິງ ແລະ ເຮັດໃຫ້ແມ່ຍິງຕົກຢູ່ໃນສະພາບບໍ່ສາມາດຊົມໃຊ້ສິດທິຂອງເຂົາເຈົ້າ ຢ່າງເທົ່າກັບຜູ້ຊາຍ.

❖ **"ບົດບາດຍິງຊາຍ ແລະ ການພັດທະນາ" ບໍ່ແມ່ນເລື້ອງດຽວກັນກັບ "ການພັດທະນາແມ່ຍິງ"**
**(Gender and Development is not Women Development).**

**ບົດບາດ ຍິງຊາຍ ແລະ ການພັດທະນາແມ່ນຫັຍງ? (Gender And Development):**

- ພິຈາລະນາ ທັງສອງ ເພດ ຍິງ ແລະ ຊາຍ, ແລະ ພິຈາລະນາ ສາຍພົວພັນ ທາງບົດບາດ (ແລະ ສິດທິ) ທີ່ທັງສອງ ເພດ ມີ (ຄືກັນ, ຫລື ຕ່າງກັນ).
- ບໍ່ພິຈາລະນາ ບັນຫາຂອງແມ່ຍິງ ສະເພາະ, ແຕ່ ພິຈາລະນາເບິ່ງ ບົດບາດ, ໜ້າທີ່ຄວາມຮັບຜິດຊອບ ແລະ ຖານະພາບ ຂອງແມ່ຍິງ ໂດຍສົມທຽບໃສ່ ຜູ້ຊາຍ.
- ພິຈາລະນາ ຄວາມຈໍາເປັນ ທີ່ທັງສອງ ເພດ ຕ້ອງປ່ຽນແປງ ເພື່ອສະໜັບສະໜູນ ເຊິ່ງກັນ ແລະ ກັນ ເຮັດການປ່ຽນແປງນັ້ນ.
- ຄວນຮັບຮູ້ວ່າ ຖ້າບໍ່ມີຍິງ ແລະ ຊາຍ ກໍຈະບໍ່ມີຄໍາວ່າ Gender ແລະ ການພັດທະນາ